ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ ນະໂຍບາຍ
NAYOBY BANK

ເລກທີ: 61.../ ທນບ,ຄພຄ
ນະຄອນຫຼວງວຽງຈັນ, ວັນທີ: 30 ກໍລະກົດ 2018

# ແຈ້ງເຕືອນ

**ເຖິງ :** ທ່ານຫົວໜ້າສາຂາ ແລະ ໜ່ວຍບໍລິການ ທະນາຄານ ນະໂຍບາຍ ທົ່ວລະບົບ
**ເລື່ອງ :** ການຈັດຕັ້ງປະຕິບັດແຈ້ງການ 181/ທນບ,ສຊ ລົງວັນທີ 23 ມີນາ 2018 ບໍ່ສໍາເລັດຕາມກໍານົດ

- ອີງໃສ່ ແຈ້ງການແນະນໍາ ເລກທີ 181/ທນບ,ສຊ ລົງວັນທີ 23 ມີນາ 2018
- ອີງໃສ່ ທິດຊີ້ນໍາຂອງຄະນະອໍານວຍການ ຄັ້ງວັນທີ 12/07/2018 ກ່ຽວກັບການເປີດກອງປະຊຸມຄົບຄະນະບໍລິຫານງານ ທົ່ວລະບົບ ໃນ 6 ເດືອນຕົ້ນປີ

ຄະນະຮັບຜິດຊອບພັດທະນາລະບົບຄໍແບ້ງຄິງ ທະນາຄານ ນະໂຍບາຍ ອອກແຈ້ງເຕືອນມາຍັງ ສາຂາ ແລະ ໜ່ວຍບໍລິການ ທົ່ວລະບົບ ສືບຕໍ່ຈັດຕັ້ງປະຕິບັດຕາມແຈ້ງການເລກທີ 181/ທນບ,ສຊ ລົງວັນທີ 23 ມີນາ 2018 ຊຶ່ງມາຮອດປະຈຸບັນນີ້ເຫັນວ່າຍັງມີບາງ ສາຂາ - ໜ່ວຍບໍລິການ ບໍ່ສາມາດຈັດຕັ້ງປະຕິບັດສໍາເລັດ ເຮັດໃຫ້ທົ່ວລະບົບບໍ່ສາມາດສະຫຼຸບລາຍງານວຽກສິນເຊື່ອໄດ້ ໜ້າວຽກທີ່ຍັງຄ້າງມີດັ່ງລຸ່ມນີ້:

1. ການສັງລວມ ID ຂອງລູກຄ້າທີ່ມີເງິນກູ້ຫຼາຍເປົ້າໝາຍ( ໃຫ້ມີ 1 ID ) ຫຼື ເງິນກູ້ທີ່ບໍ່ແມ່ນລູກຄ້າຄົນດຽວກັນແຕ່ນໍາໃຊ້ລະຫັດ ID ດຽວກັນ;
2. ການກອດກາຂໍ້ມູນກ່ຽວກັບຫຼັກຊັບຄໍ້າປະກັນ( ມູນຄ່າທີ່ຕິດຕາມທາງບັນຊີ ແມ່ນ ໃຫ້ອີງໃສ່ສັນຍາຄໍ້າປະກັນຫຼັກຊັບ );

ໃຫ້ສະຫຼຸບສັງລວມ ສິ່ງທີ່ມງານຄໍແບ້ງຄິງທີ່ຮັບຜິດຊອບແຕ່ລະສາຂາ ສໍາເລັດບໍ່ໃຫ້ກາຍ ວັນທີ 03/08/2018 ຖ້າຫາກສາຂາ ແລະ ໜ່ວຍບໍລິການໃດ ບໍ່ສາມາດຈັດຕັ້ງປະຕິບັດສໍາເລັດຕາມທີ່ສໍານັກງານໃຫຍ່ກໍານົດ ຕໍ່ກັບບັນຫາດັ່ງກ່າວ ຄະນະສາຂາ ແລະ ໜ່ວຍບໍລິການ ຈະຕ້ອງໄດ້ຮັບຜິດຊອບໂດຍກົງຕໍ່ກັບບັນຫາທີ່ເກີດຂຶ້ນ;

ດັ່ງນັ້ນ; ຈຶ່ງອອກແຈ້ງເຕືອນສະບັບນີ້ມາຍັງສາຂາ ແລະ ໜ່ວຍບໍລິການ ທົ່ວລະບົບ ສືບຕໍ່ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງຢ່າງເຂັ້ມງວດ.

**ຄະນະຮັບຜິດຊອບພັດທະນາຄໍແບ້ງຄິງ ທນບ**

ທະນາຄານ ແຫ່ງ ສປປ ລາວ
ທະນາຄານນະໂຍບາຍ
NAYOBY BANK (NBB)
ນະຄອນຫລວງວຽງຈັນ

ນ.ວຽງເງິນ ສິນພິງ